# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ສວນໝາກເຂືອ

(ສະບັບທົດລອງ)



ຂຽນໂດຍ: ທ່ານ ພຸດທະວົງ ເພັດສະດີສັກ

ຂໍ້ມູນຈາກ: ບ້ານ ໂພນທອງ ເມືອງ ນາຊາຍທອງ

ນະຄອນຫລວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ສວນໝາກເຂືອ

ຮິບໂຮມ ແລະຈັດໜ້າໂດຍ: ນາງ ນ່າ ຄຳເຮືອງ

ຮຽບຮຽງໂດຍ: ອ.ຈ ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳໄຫວ

ອ.ຈ ລັ່ງ ແສງດາລາ

ອ.ຈ ທອງຂັນ

ແຕ້ມໂດຍ: ທ້າວ ສົມເພັດ ຈັນທະລາ

ເຈົ້າຂອງ: ພະແນກສຶກສານະຄອນຫລວງວຽງຈັນແລະ

ສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation

A world for Children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປຶ້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານແລະອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຫຼວງວຽງຈັນ

ປຶ້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຫວັງຄິດວ່າປຶ້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍແລະຂາດໄປຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາຂອງສວນໝາກເຂືອ

ສວນໝາກເຂືອມັນມີມາຕັ້ງແຕ່ປູ່ຍ່າຕາຍາຍເຮົາດົນແລ້ວຕັ້ງແຕ່ກ່ອນໝາກເຂືອນີ້ແມ່ນເພິ່ນປູກຢູ່ຕາມຫົວໄຮ່ປາຍນາ ຫລືສວນຄົວເທົ່ານັ້ນ.ເຮັດພໍແຕ່ໄດ້ກິນຢູ່ໃນຄອບຄົວຂອງໃຜລາວຊື່ໆ. ປັດຈຸບັນນີ້ເພິ່ນຈິ່ງໄດ້ຫັນມາເຮັດເສດຖະກິດເພື່ອຜະລິດເປັນສິນຄ້າສົ່ງຂາຍຕາມທ້ອງຕະຫລາດ.ຈິ່ງເຮັດໃຫ້ບາງຄອບຄົວສ້າງເປັນເສດຖະກິດໃນຄອບຄົວໃຫ້ດີຂື້ນ.

## ອຸປະກອນ

ສະຖານທີ່



ແນວພັນ



PDF created with pdfFactory Pro trial version www.pdffactory.com

ຈົກ



ສຽມ



ບົວ



PDF created with pdfFactory Pro trial version www.pdffactory.com

ຄຸ



ຝຸ່ນ



## <u>ວິທີການເຮັດສວນມາກເຂືອ</u>

ກ່ອນອື່ນເຮົາຕ້ອງຫາແນວພັນໃຫ້ໄດ້ເສຍກ່ອນ.



PDF created with pdfFactory Pro trial version www.pdffactory.com

ເມື່ອໄດ້ແນວພັນແລ້ວເຮົາ ຈຶ່ງມາກຽມດິນ,



ເສຍຫຍ້າ



ເຮັດໜານກ້າແກ່ນໃສ່ຝຸ່ນຄອກ ຫລືຝຸ່ນວິທະຍາສາດກໍໄດ້. ພໍ ຮອດໜຶ່ງເດືອນແລ້ວກໍກຽມຂຸດໃສ່ຝຸ່ນຮອງພື້ນ



PDF created with pdfFactory Pro trial version www.pdffactory.com

ແລ້ວຈຶ່ງນຳເອົາເບ້ຍໄປປູກໃສ່ສວນແລ້ວບົວລະບັດຕໍ່ໄປຈົນໄດ້ຮັບຜົນ.



## ຫຼັກການທີ່ສຳຄັນ:

### ເຫດຜົນ

ການເຮັດສວນໝາກເຂືອກ່ອນອື່ນເຮົາຕ້ອງເລືອກແນວພັນທີ່ບໍ່ມີແມງໄມ້ເຈາະ, ໜ່ວຍໃຫຍ່ ແລະແກ່ນຕຶ່ງດີ. ພາຍຫຼັງທີ່ປູກແລ້ວເຮົາຄວນບົວລະບັດກໍຄືການເສຍຫຍ້າເພື່ອບໍ່ໃຫ້ມັນຮົກຫຼາຍ, ຖ້າຫຍ້າຮົກຫຼາຍກໍຈະເຮັດໃຫ້ຕົ້ນ ໝາກເຂືອນັ້ນມີການຈະເລີນເຕີບໂຕຊ້າ

## ຄຸນປະໂຫຍດຂອງສວນໝາກເຂືອ

ຄຸນປະໂຫຍດຂອງສວນໝາກເຂືອແມ່ນ ມີຜົນດີຫລາຍຢ່າງຕໍ່ຄອບຄົວປະຊາຊົນລາວເຮົາຄື:

- ປະກອບເຂົ້າໃນສະບຽງອາຫານຂອງຄົນເຮົາໄດ້ຫລາຍຢ່າງແລະປະກອບເປັນຜັກກັບກໍໄດ້.
- ຖ້າຫາກຄອບຄົວເຮົາປູກໄດ້ຫຼາຍ ກໍສາມາດນຳໄປຂາຍເຮັດໃຫ້ເສດຖະກິດຄອບຄົວດີຂຶ້ນໄດ້.

PDF created with pdfFactory Pro trial version www.pdffactory.com

# ບົດເລກ:

ໝາກເຂືອຂາວ1 ກກ ມີຈຳນວນ33ໜ່ວຍ. ຖ້າຫາກຊື້ 4 ກກຈະໄດ້ໝາກເຂືອຈັກໜ່ວຍ?.

# **ຄຳຕອບ:**

ຖ້າເຮົາຊື້ໝາກເຂືອ 4 ກກ ເຮົາຈະໄດ້ໝາກເຂືອຈຳນວນ 132 ໜ່ວຍ.

**ກາບ: ສວນໝາກເຂືອ**

ສວນໝາກເຂືອ ຂອງຂ້ອຍງາມຫຼາຍ
ໄດ້ປູກຢາຍ ເປັນຖັນເປັນແຖວ
ຍາມດອກແລ້ວ ເອົາຝຸ່ນລົງໃສ່
ໝາກກໍໃຫຍ່ ເປັນໝາກກໍຫຼາຍ
ຈຶ່ງໄດ້ຂາຍ ຕາມທ້ອງຕະຫຼາດ
ບໍ່ເຄີຍຂາດ ເຮັດແຕ່ລະປີ
ຈຶ່ງຄ່ອຍມີ ເງິນຄຳໃຊ້ຈ່າຍ
ຂໍບອກໄວ້ ເພື່ອລູກເພື່ອຫຼານ

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ການເຮັດສວນໝາກເຂືອ

| | |
|---|---|
| ໂອ່ໂຣະໂອ່ | ໂຣະໂອ່ໂຣະໂອ່ |
| ມາພວກເຮົາມາ | ມາສ້າງມາສາ |
| ມາພັດທະນາ | ເຮັດສວນໝາກເຂືອ |
| ບ້ານໃຕ້ບ້ານເໜືອ | ມາເຮັດນຳກັນ |
| ເຮົາມາສ້າງສັນ | ຮ່ວມແຮງສ້າງກໍ່ |
| ພວກເຮົາສືບຕໍ່ | ສ້າງບ້ານເມືອງເຮົາ |
| ໂອ່ໂອ່ໂອ່......... | ຮິວ............. |

## ເພງ: ການເຮັດສວນ

| | |
|---|---|
| ໝາກເຂືອນ້ອຍ | ມັນມີຜົນດີ |
| ມັນຍັງມີ | ຜົນດີຫລາຍອັນ |
| ປະກອບມັນ | ໃສ່ໃນອາຫານ |
| ຮັບປະທານ | ກໍແຊບອີ່ຫລີ |
| ຈຶ່ງໄດ້ມີ | ສວນນ້ອຍສວນໃຫຍ່ |
| ປະກອບໃສ່ | ໃນບົດເພງລາວ |

PDF created with pdfFactory Pro trial version www.pdffactory.com

## ລຳ: ຊ່ວຍກັນສ້າງສວນ

ມາເດີມາເດີ  ພວກພີ່ນ້ອງ
ນ້ອຍໜຸ່ມຮັກຫອມ  ພ້ອມກັນມາສ້າງສາ
ພັດທະນາ ນາສວນ  ໃຫ້ມັນເຮືອງມັນຮຸ່ງ
ຂໍເຊີນປ້າແລະລຸງ  ຮ່ວມແຮງກັນສ້າງກໍ່
ເຊີນເອົາແມ່ແລະພໍ່  ຊ່ວຍກັນສ້າງສາ
ພັດທະນາເມືອງບ້ານ  ໃຫ້ຈະເລີນຮຸ່ງເຮືອງທ່ານເອີຍ

PDF created with pdfFactory Pro trial version www.pdffactory.com

## ຮູບ ແລະ ປະຫວັດຂອງຜູ້ຂຽນ



ຊື່ ທ່ານ ພຸດທະວົງ ນາມສະກຸນ ເພັດສະດີສັກ
ອາຍຸ 44 ປີ, ອາຊີບ ເຮັດນາ

## ເຫດຜົນຂອງການຂຽນປຶ້ມນີ້:

ເພື່ອເຮັດໃຫ້ນັກຮຽນ ແລະເຍົາວະຊົນຮຸ່ນໃໝ່ໄດ້ຮັບຮູ້ເຖິງຄຸນປະໂຫຍດຂອງການເຮັດສວນ ແລະຢາກສືບທອດໃຫ້ຄົນລຸ້ນໃໝ່ຮັບຮູ້ຕໍ່ໆໄປ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com